# ມິຊຊາອາທິດທີ 2 ກຳນົດບຳເພັນສິນ
## ວັນທີ 5 ມີນາ 2023



**ພຣະວໍລະສານໂດຍນັກບຸນມັດເທວ 17, 1-9**

ໃນເວລານັ້ນ ພຣະເຢຊູເຈົ້າໄດ້ເອົາເປໂຕ, ຢາໂກເບແລະຢວງຜູ້ນ້ອງໄປນຳ ແລ້ວພາຂຶ້ນພູສູງໜ່ວຍໜຶ່ງ. ພຣະອົງໄດ້ສຳແດງພຣະກາຍຮຸ່ງເຮືອງຕໍ່ໜ້າພວກເຂົາ. ພຣະພັກຂອງພຣະອົງຮຸ່ງແຈ້ງຄືດວງຕາເວັນ ເຄື່ອງທົງຂອງພຣະອົງຂາວງາມຄືລໍຝ້າຍ. ໃນເວລານັ້ນ, ໂມແຊກັບເອລີຢາ ກໍປະຈັກມາສົນທະນາກັບພຣະອົງ. ເປໂຕຈຶ່ງທູນພຣະອົງວ່າ: ພຣະອາຈານເອີຍ, ຢູ່ບ່ອນນີ້ເກີນວ່າມ່ວນຫລາຍ. ຖ້າຫາກວ່າພຣະອາຈານພໍໃຈນຳ ພວກຂ້ານ້ອຍຈະສ້າງຜາສາດສາມຫລັງ. ຫລັງໜຶ່ງຖະຫວາຍພຣະອາຈານ, ຫລັງໜຶ່ງຖະຫວາຍໂມແຊ ແລະອີກຫລັງໜຶ່ງຖະຫວາຍທ່ານເອລີຢາ.

ໃນເວລາເປໂຕພວມເວົ້າຢູ່ນັ້ນ, ກໍມີເມກຮຸ່ງເຫລື້ອມກ້ອນໜຶ່ງມາປົກບັງພວກເຂົາໄວ້. ແລ້ວມີສຽງກ່າວອອກມາແຕ່ເມກວ່າ: ຜູ້ນີ້ແມ່ນບຸດສຸດທີ່ຮັກຂອງເຮົາ, ເຮົາພໍໃຈນຳເປັນຢ່າງຍິ່ງ, ພວກເຈົ້າຈົ່ງເຊື່ອຟັງພຣະອົງເຖີດ. ໄດ້ຍິນຄວາມນີ້ພວກລູກສິດກໍພາກັນໝູບຕິດດິນ ແລະມີຄວາມຢ້ານກົວເປັນຢ່າງຍິ່ງ. ພຣະເຢຊູເຈົ້າສະເດັດມາໃກ້ໆພວກເຂົາ ບາຍຕ້ອງພວກເຂົາແລະກ່າວວ່າ: ຈົ່ງລຸກຂຶ້ນ ຢ່າຢ້ານກົວເລີຍ. ພວກລູກສິດມືນຕາຂຶ້ນແນມເບິ່ງ, ບໍ່ເຫັນໃຜ, ເຫັນແຕ່ພຣະເຢຊູເຈົ້າຜູ້ດຽວ. ເມື່ອພ້ອມກັນລົງຈາກພູ, ພຣະເຢຊູເຈົ້າໄດ້ສັ່ງບອກພວກເຂົາວ່າ: ຢ່າເວົ້າສິ່ງທີ່ໄດ້ເຫັນນັ້ນໃຫ້ຜູ້ໃດຟັງ ຈົນຮອດເວລາບຸດມະນຸດຈະໄດ້ກັບຄືນຊີບຈາກພວກຜູ້ຕາຍ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ອາທິດທີ່ຜ່ານມາ, ພຣະເຢຊູເຈົ້າໄດ້ເຂົ້າໃນທີ່ປ່ງວ ອັນເປັນສະຖານທີ່ແຫ່ງການປະຈົນຫລອກລວງຂອງຜີປີສາດ. ວັນນີ້ພຣະເຢຊູເຈົ້າໄດ້ຂຶ້ນບົນພູເຂົາ, ສະຖານທີ່ແຫ່ງການພົບພໍ້ກັບພຣະເຈົ້າ. ອາທິດແລ້ວນີ້, ພຣະເຢຊູເຈົ້າຖືກຜີປີສາດປະຈົນຫລອກລວງ ເພື່ອສະແດງໃຫ້ພວກເຮົາເຫັນເຖິງຄວາມເປັນມະນຸດຂອງພຣະອົງ. ວັນນີ້, ພຣະເຢຊູເຈົ້າໄດ້ສຳແດງພຣະກາຍຮຸ່ງເຮືອງຂອງພຣະອົງ, ອັນແມ່ນສະພາບຄວາມເປັນພຣະເຈົ້າຂອງພຣະອົງໃຫ້ພວກລູກສິດເຫັນ. ການປ່ຽນພຣະກາຍຂອງພຣະເຢຊູເຈົ້າຈາກຮ່າງກາຍມະນຸດມາເປັນພຣະກາຍຮຸ່ງເຮືອງນີ້ ເປັນການສຳແດງໃຫ້ພວກເຮົາເຫັນລ່ວງໜ້າເຖິງການກັບເປັນຄືນມາຈາກຄວາມຕາຍຂອງພຣະອົງ. ແຕ່ກ່ອນທີ່ຈະເຖິງເວລານັ້ນ, ພຣະເຢຊູເຈົ້າຈຳຕ້ອງຖືກຈັບ, ທໍລະມານ, ແລະຕາຍບົນໄມ້ກາງເຂນ. ຫລືເວົ້າອີກຢ່າງ, ກ່ອນທີ່ຈະເຖິງວັນປາສກາ, ວັນແຫ່ງໄຊຊະນະແຫ່ງຄວາມຕາຍນັ້ນ, ພຣະເຢຊູເຈົ້າຕ້ອງໄດ້ຜ່ານວັນສຸກສັກສິດ, ວັນທີ່ພຣະອົງຖືກທໍລະມານແລະຕາຍ. ເພາະສະນັ້ນ, ພຣະເຢຊູເຈົ້າຈຶ່ງໄດ້ຫ້າມພວກລູກສິດບໍ່ໃຫ້ເລົ່າສິ່ງທີ່ພວກເຂົາໄດ້ເຫັນບົນພູເຂົາ ກ່ອນທີ່ບຸດມະນຸດຈະກັບເປັນຄືນມາຈາກພວກຜູ້ຕາຍ. ຖ້າພວກເຮົາເປັນສິດຂອງພຣະເຢຊູເຈົ້າຄືເປັນຜູ້ເດີນຕາມພຣະອົງໄປ. ແນ່ນອນພວກເຮົາໄດ້ເຂົ້າໃນທີ່ປ່ງວພ້ອມກັບພຣະອົງ, ໄດ້ຖືກປະຈົນຫລອກລວງ ແລະໄດ້ຕາຍເໝືອນກັບພຣະອົງ. ແຕ່ພ້ອມກັບພຣະເຢຊູເຈົ້າພວກເຮົາຈະໄດ້ຊະນະການປະຈົນຫລອກລວງ ແລະພ້ອມກັບພຣະອົງພວກເຮົາຈະໄດ້ກັບເປັນຄືນມາຈາກຄວາມຕາຍ. ສິ່ງນີ້ເປັນກຳລັງໃຈແລະຄວາມຫວັງສຳລັບພວກເຮົາໃນການເດີນທາງຢູ່ບົນໂລກນີ້ ແລະເປັນຕົ້ນໃນການດຳລົງຊີວິດໃນກຳນົດບຳເພັນສິນນີ້. ເຖິງວ່າພວກເຮົາຈະຖືກປະຈົນຫລອກລວງແລະຕົກໃນບາບແລ້ວກໍຕາມ, ແຕ່ພຣະເຢຊູເຈົ້າກໍພ້ອມທີ່ຈະໃຫ້ອະໄພພວກເຮົາແລະຊ່ວຍພວກເຮົາໃຫ້ລຸກຂຶ້ນຈາກການບາບຂອງພວກເຮົາຢູ່ສະເໝີ. ເພາະພຣະອົງໄດ້ຊະນະການປະຈົນຫລອກລວງແລະຄວາມຕາຍທີ່ມາຈາກບາບແລ້ວ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ມີຄວາມກ້າຫານກ້າວໄປພ້ອມກັບພຣະອົງບົນເສັ້ນທາງແຫ່ງການທົດສອບແລະການປະຈົນຫລອກລວງຕ່າງໆໃນຊ່ວງກຳນົດບຳເພັນສິນນີ້. ເພື່ອລູກຈະໄດ້ໄປຮອດຈຸດໝາຍປາຍທາງຂອງລູກຄືວັນບຸນປາສກາທີ່ຈະມາເຖິງ, ອັນແມ່ນວັນແຫ່ງໄຊຊນະຂອງພຣະອົງເໜືອບາບແລະຄວາມຕາຍດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ